# ຄຳນຳ

ສາທຸອ່ອນແກ້ວ ກິດຕິພັດໂທ ປະທານຂອງອົງການພຸດທະສາສະໜາສຳພັນລາວ
ແຂວງຫລວງພະບາງ

Text from: **The Lao Sangha and Modernity**
Research at the Buddhist Archive of Photography, 2005-2015

ISBN: 978 - 1 - 941811 - 02 - 390000

Available at: www.ananthabooks.com

# ຄຳນຳ

**ສາທຸອ່ອນແກ້ວ ກິດຕິພັດໂທ, ປະທານຂອງອົງການພຸດທະສາສະໜາສຳພັນລາວ ແຂວງຫລວງພະບາງ**

ປຶ້ມຫົວນີ້ແມ່ນຜົນງານອັນຈົບງາມ, ເປັນຂໍ້ມູນອັນມີຄຸນຄ່າ ແລະມີເນື້ອຫາທີ່ເຂັ້ມຂຸ້ນ ຂອງສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງໃນໄລຍະ 10 ປີຜ່ານມາ, ໂດຍແມ່ນເກີດຈາກການສຶກສາຄົ້ນຄວ້າຂອງນັກວິຊາການລາວແລະຕ່າງປະເທດ ຜູ້ທີ່ມີຄວາມຊ່ຽວຊານສະເພາະດ້ານ ທີ່ນຳໃຊ້ເອກະສານຊັ້ນຕົ້ນ ຈາກສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງ ເປັນຫຼັກ ໃນການຂຽນບົດຄວາມຂອງທ່ານ ລົງໃນໜັງສື ເຫຼັ້ມນີ້.

ສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງ ແມ່ນໂຄງການໜຶ່ງຂອງອົງການພຸດທະສາສະໜາສຳພັນລາວ ແຂວງຫຼວງພະບາງ (ອພສ), ຕັ້ງຢູ່ທີ່ສາລາທຳມະວິຫານ ວັດສຸວັນນະຄີລີ, ສ້າງຕັ້ງຂຶ້ນໃນປີ 2006 ໂດຍສາທຸໃຫຍ່ຄຳຈັນ ວິຣະຈິດຕະມະຫາເຖລະ, ເຈົ້າອະທິການວັດແສນສຸຂາຣາມ ແລະ ປະທານ ອພສ. ແຂວງຫຼວງພະບາງ, ຮ່ວມກັບທ່ານຮັນສ໌ ເກອອກ ເບີເກີ ນັກຖ່າຍຮູບແລະນັກຂຽນ ຊາວເຢຍລະມັນ. ໃນລະຫວ່າງ ປີ 2007-2011 ໄດ້ຈັດຕັ້ງໂຄງການອະນຸລັກແລະປົກປັກຮັກສາ ເອກະສານຮູບພາບພະພຸດທະສາສະໜາຂຶ້ນ ໂດຍໄດ້ຮັບທຶນສະໜັບສະໜູນຈາກຫໍສະໝຸດອັງກິດ, ຜ່ານໂຄງການ ເອກະສານທີ່ຢູ່ໃນສະພາບຊຸດໂຊມ, ເລີ່ມຕົ້ນຈາກວຽກງານອະນຸລັກແລະຄົ້ນຄວ້າ ຮູບພາບເກົ່າແກ່ທີ່ເພິ່ນສະສົມໄວ້ທີ່ກຸຕິຂອງເພິ່ນທີ່ວັດແສນສຸຂາຣາມ ຮ່ວມກັບຫໍສະໝຸດແຫ່ງຊາດ ນະຄອນຫຼວງວຽງຈັນ.

ຕໍ່ມາ ໂດຍຄວາມຮ່ວມມືຂອງຄະນະສົງຫຼວງພະບາງ, ໂດຍສະເພາະແມ່ນຂ້າພະເຈົ້າເອງ, ໂຄງການໄດ້ຜັນຂະຫຍາຍ ຂອບເຂດແລະໜ້າວຽກການຄົ້ນຄວ້າແລະອະນຸລັກໄປຍັງວັດອື່ນໆ ໃນຫຼວງພະບາງ. ໃນໄລຍະ 4 ປີ ໂຄງການສາມາດທ້ອນໂຮມຮູບພາບແລະຟິມຮູບ ຈຳນວນ 33,393 ລາຍການ ຈາກ 19 ວັດ ແລະ ຂອງ ສະສົມສ່ວນບຸກຄົນອີກ 5 ທ່ານ, ມາເກັບໄວ້ທີ່ສູນຂໍ້ມູນພະພຸດທະສາສະໜາ.

ຮູບພາບເຫຼົ່ານັ້ນແມ່ນ ບັນທຶກເຫດການຕ່າງໆ ກ່ຽວກັບພະພຸດທະສາສະໜາໃນລາວ ໂດຍສະພາະແມ່ນຫຼວງພະບາງ ຕັ້ງແຕ່ຕົ້ນສະຕະວັດທີ 20 ມາເຖິງ 2007, ເຊິ່ງປະກອບມີຮູບ ພະສົງ, ສາມະເນນ, ກິດຈະວັດຂອງພະສົງ, ການສຶກສາຂອງພະສົງ, ການເດີນທາງທ່ອງທ່ຽວສະແຫວງບຸນຂອງຊາວພຸດ, ບຸນປະເພນີ, ພິທີກຳ, ບຸກຄົນໃນປະຫວັດສາດ, ການສ້າງສາວັດວາອາຮາມ ແລະອື່ນໆ. ນອກຈາກນັ້ນ, ຍັງມີຮູບພາບ ຈາກວັດແລະບຸກຄົນນຳມາມອບໃຫ້ສູນຂໍ້ມູນພະພຸດທະສາສະໜາເພື່ອການອະນຸລັກແລະຄົ້ນຄວ້າຕື່ມອີກ ລວມແລ້ວມີທັງໝົດຫຼາຍກວ່າ 35,000 ລາຍການ.

ຕັ້ງແຕ່ປີ 2011 ຈົນເຖິງປັດຈຸບັນ, ສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງ ໄດ້ຮ່ວມກັບຫໍສະໝຸດແຫ່ງຊາດ, ແລະ ສະຖາບັນເອເຊຍ-ອາຟະລິກາ ມະຫາວິທະຍາໄລຮຳບວກ ປະເທດ ເຢຍລະມັນ ໄດ້ອະນຸລັກແລະຄົ້ນຄວ້າເອກະສານ, ປຶ້ມເກົ່າແກ່ ແລະໜັງສືໃບລານ ປະກອບດ້ວຍຈົດໝາຍສ່ວນຕົວຂອງສາທຸໃຫຍ່ຄຳຈັນ ຈຳວນ 1,171 ສະບັບ, ຈົດໝາຍທາງການແລະເອກະສານທົ່ວໄປຂອງສາທຸໃຫຍ່ຄຳຈັນ ຈຳນວນ 4,866 ສະບັບ, ຈົດໝາຍທາງການແລະເອກະສານທົ່ວໄປ ຂອງສາທຸໃຫຍ່ຄຳຝັ້ນ ສີລະສັງວະຣະ ມະຫາເຖລະ ວັດສຸວັນນະຄີລີ ຫຼາຍກວ່າ 200 ສະບັບ, ປຶ້ມເກົ່າແກ່ທາງພະພຸດທະສາສະໜາຂອງສາທຸໃຫຍ່ຄຳຈັນ ແລະຂອງວັດອື່ນ ໆ ຈຳນວນ 584 ສະບັບ, ສ່ວນໜັງສືໃບລານຂອງສະສົມຂອງສາທຸໃຫຍ່ຄຳຈັນ ແລະຂອງວັດອື່ນໆ ນັ້ນ ກຳລັງຢູ່ໃນລະຫວ່າງດຳເນີນ ການຄົ້ນຄວ້າ.

ກ່າວໄດ້ວ່າ, ສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງ ເປັນສູນຂໍ້ມູນແຫ່ງໜຶ່ງທີ່ມີເອກະສານຊັ້ນຕົ້ນກ່ຽວກັບພະພຸດທະສາສະໜາເຖລະວາດຫຼາຍທີ່ສຸດແຫ່ງໜຶ່ງໃນພາກພື້ນອາຊີຕາວັນອອກສ່ຽງໃຕ້. ເອກະສານແລະຮູບພາບທຸກສະບັບທີ່ກ່າວມານັ້ນ ແມ່ນໄດ້ອັດສຳເນົາເປັນຮູບດີຈິຕອນເພື່ອສະດວກແກ່ນັກວິຊາການລາວ, ນັກວິຊາການຕ່າງປະເທດ ແລະຜູ້ທີ່ສົນໃຈ ໄດ້ໃຊ້ເປັນຂໍ້ມູນໃນການສຶກສາແລະຄົ້ນຄວ້າ. ສ່ວນຕົ້ນສະບັບແມ່ນຖືກສະຫງວນໄວ້ເປັນສົມບັດຂອງຊາວລາວທັງຊາດ ໂດຍສະເພາະຊາວຫຼວງພະບາງ ຕະຫຼອດໄປ.

ໃນໂອກາດ ປີ 2015 ນີ້ ເປັນປີຄົບຮອບ 10 ປີ ຂອງການສ້າງຕັ້ງສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງ ຈຶ່ງໄດ້ຮີບໂຮມເອົາບົດຄວາມວິຊາການທີ່ຂຽນຈາກນັກວິຊາການທັງຄົນລາວແລະຊາວຕ່າງປະເທດ, ຜູ້ທີ່ໄດ້ມາຮ່ວມເຮັດວຽກຄົ້ນຄວ້າຢູ່ໃນສູນຂໍ້ມູນແຫ່ງນີ້ໃນໄລຍະ 10 ຜ່ານມາ ປະກອບດ້ວຍທ່ານຮັນສ໌ ເກອອກ ເບີເກີ ນັກຖ່າຍຮູບແລະນັກຂຽນ ຊາວເຢຍລະມັນ, ທ່ານສາດສະດາຈານ ດຣ. ໂຟນເກີ ກຣາໂບສະກີ ນັກປະຫວັດສາດ ລາວ-ໄທ ຊາວເຢຍລະມັນ, ທ່ານຮອງສາດສະດາຈານບຸນເລີດ ແສງສຸລິນ ນັກພາສາສາດລາວ ມະຫາວິທະຍາໄລແຫ່ງຊາດ ວຽງຈັນ, ທ່ານນາງ ສາດສະດາຈານ ດຣ. ແຄັດເທີຣີນ ໂຊຮອງ-ແບັກ ນັກມະນຸດວິທະຍາສັງຄົມ ຊາວຝລັ່ງ, ທ່ານມາຕິນ ໂຢກິນສ໌ ນັກອະນຸລັກຮູບພາບ ຊາວເຢຍລະມັນ ແລະທ່ານຄຳອອນ ບຸນຍະພອນ ນັກວິຊາການປະຈຳ ສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງ. ພວກທ່ານໄດ້ສະທ້ອນແນວຄວາມຄິດແລະທັດສະນະຕໍ່ປະຫວັດສາດ ພຸດທະສາສະໜາ ແລະພາລະບົດບາດຂອງພະສົງລາວໃນສະຕະວັດທີ 20 ເພື່ອເປັນ ແວ່ນແຍງໃຫ້ແກ່ພະສົງ, ສາມະເນນ, ນັກສຶກສາ ແລະນັກຄົ້ນຄວ້າຮຸ່ນໃໝ່ ໄດ້ສືບຕໍ່ແລະເສີມຂະຫຍາຍ. ສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງ ກຳລັງເຕີບໃຫຍ່ຂະຫຍາຍຕົວແລະຈະກາຍເປັນສູນຂໍ້ມູນທາງພະພຸດທະສາສະໜາແຫ່ງຊາດລາວ ທີ່ຕອບສະໜອງຂໍ້ມູນໃຫ້ແກ່ການສຶກສາຄົ້ນຄວ້າປະຫວັດສາດພຸດທະສາສະໜາ ແລະສືບສ້າງພາລະບົດບາດຂອງພະສົງລາວ.

ຂ້າພະເຈົ້າໃນນາມປະທານ ອພສ. ແຂວງຫຼວງພະບາງ ແລະຜູ້ອຳນວຍການສູນຂໍ້ມູນພະພຸດທະສາສະໜາຫຼວງພະບາງ ຂໍສະແດງຄວາມຂອບໃຈ ແລະອະນຸໂມທະນານຳທຸກພາກສ່ວນ ທີ່ໄດ້ມີ ສ່ວນຮ່ວມສະໜັບສະໜູນ ວຽກງານການອະນຸລັກແລະຄົ້ນຄວ້າ ຂອງສູນຂໍ້ມູນພະພຸດທະສາສະໜາ ຫຼວງພະບາງໃນໄລຍະ 10 ປີຜ່ານມາ ດັ່ງຕໍ່ໄປນີ້ຄື: ຫໍສະໝຸດແຫ່ງຊາດ, ຫໍສະໝຸດອັງກິດ, ມູນນິທິ ບາດົວ, ສະຖານທູດເຢຍລະມັນປະຈຳລາວ, ສະຖານທູດອາເມລິກາປະຈຳລາວ, ອາຈານກົງເດືອນ ເນດຕະວົງ, ທ່ານຮັນສ໌ເກອອກ ເບີເກີ, ສາດສະດາຈານໂຟນເກີ ກຣາໂບສະກີ, ທ່ານມາຕິນ ໂຢກິນສ໌, ທ່ານໄບຣອັນ ລິງແຮມ, ທ່ານອາຈານບຸນເລີດ ແສງສຸລິນ, ທ່ານປີເຕີມາກຸດ-ຣີຈີ, ແລະທ່ານອາຈານຄຳອອນບຸນຍະພອນ. ຂໍອຳນາດຄຸນພະສີລັດຕະນະໄຕແລະສິ່ງສັກສິດໃນສາກົນໂລກ ຈົ່ງປົກປ້ອງຄຸ້ມຄອງທ່ານທັງຫຼາຍ ແລະຈະເລີນດ້ວຍອາຍຸ ວັນນະ ສຸຂະ ພະລະ ເທີ້ນ.

ວັດປ່າຜາໂອ ຫຼວງພະບາງ, ວັນທີ 28 ເມສາ 2015